ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====-----

**ຄະນະກຳມະການຄຸ້ມຄອງ** **ເລກທີ 007 /ຄລຕ**

**ຫຼັກຊັບ ແລະ ຕະຫຼາດຫຼັກຊັບ** **ນະຄອນຫຼວງວຽງຈັນ ວັນທີ 08 ກໍລະກົດ 2010**

# ຂໍ້ຕົກລົງ
# ວ່າດ້ວຍພາລະບົດບາດ ແລະ ໜ້າທີ່
# ຂອງຄະນະປະສານງານຂອງ ຄລຕ

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 051/ນຍ ລົງວັນທີ 25 ພຶດສະພາ 2009.

## ປະທານຄະນະກຳມະການ
## ຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ
## ອອກຂໍ້ຕົກລົງ:

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດພາລະບົດບາດ ແລະ ໜ້າທີ່ ຂອງຄະນະປະສານງານຂອງກະຊວງ ແລະ ອົງການທຽບເທົ່າ ໃນການປະກອບສ່ວນກະກຽມສ້າງຕັ້ງຕະຫຼາດຫຼັກຊັບ ໃຫ້ບັນລຸຕາມຈຸດປະສົງລະດັບຄາດໝາຍ.

**ມາດຕາ 2. ພາລະບົດບາດ ແລະ ໜ້າທີ່**

2.1 ພາລະບົດບາດ ແລະ ໜ້າທີ່ລວມຂອງແຕ່ລະຄະນະປະສານງານມີຄື:

- ເປັນກອງເລຂາໃຫ້ແກ່ຜູ້ຕາງໜ້າກະຊວງ ຫຼື ອົງກອນທຽບເທົ່າຂອງຕົນທີ່ຖືກແຕ່ງຕັ້ງເປັນຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບໃນການເກັບກຳ

ວຽກງານທີ່ກ່ຽວຂ້ອງກັບຕົນມາສຶກສາຄົ້ນຄວ້າ, ຜັນຂະຫຍາຍ, ສະຫຼຸບລາຍງານ ແລະ ມີຄຳເຫັນຢ່າງເປັນລາຍລັກອັກສອນ ຫຼື ບໍ່ເປັນລາຍລັກອັກສອນຕາມກໍລະນີ;

- ປະສານງານກັບສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ປະສານງານພາຍໃນກະຊວງ ຫຼື ອົງກອນທຽບເທົ່າຂອງຕົນ ຫຼື ກະຊວງ ແລະ ອົງກອນອື່ນໆ ທີ່ກ່ຽວຂ້ອງ;
- ລາຍງານຄວາມຄືບໜ້າກ່ຽວກັບວຽກງານທີ່ຕົນປະຕິບັດກ່ຽວກັບວຽກງານການສ້າງຕັ້ງຕະຫຼາດຫຼັກຊັບ ໃຫ້ແກ່ບັນດາຄະນະປະສານງານ ແລະ ພາກສ່ວນທີ່ກ່ຽວຂ້ອງ;
- ເຂົ້າຮ່ວມກອງປະຊຸມຂອງບັນດາຄະນະປະສານງານທີ່ສຳນັກງານ ຄລຕ ຈັດຂຶ້ນແຕ່ລະຄັ້ງ ເພື່ອປຶກສາຫາລືກ່ຽວກັບວຽກງານກະກຽມສ້າງຕັ້ງຕະຫຼາດຫຼັກຊັບ;
- ປະສານສົມທົບກັບສຳນັກງານຄະນະກຳມະການຄຸ້ມຄອງຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອຈັດຕັ້ງການເຜີຍແຜ່ກ່ຽວກັບລະບຽບກົດໝາຍຕ່າງໆ ທາງດ້ານການຄຸ້ມຄອງ ແລະ ການເຄື່ອນໄຫວທຸລະກິດຫຼັກຊັບ ພາຍໃນກະຊວງ ແລະ ທະບວງຂອງຕົນ;
- ປະຕິບັດວຽກງານອື່ນໆ ຕາມການຊີ້ນຳຂອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃນການສ້າງຕັ້ງຕະຫຼາດຫຼັກຊັບ ຫຼື ຕາມມະຕິກອງປະຊຸມຄະນະປະສານງານ.

2.2 ພາລະບົດບາດ ແລະ ໜ້າທີ່ສະເພາະຂອງແຕ່ລະຄະນະປະສານງານມີຄືດັ່ງນີ້:

1) **<u>ສຳນັກງານ ຄລຕ</u>**

- ເປັນໃຈກາງໃນການປະສານງານກັບຄະນະປະສານງານຕ່າງໆ ທີ່ຖືກແຕ່ງຕັ້ງຕາມຂໍ້ກຳນົດສະບັບນີ້ ເພື່ອເກັບກຳ ແລະ ຈັດສົ່ງຂໍ້ມູນ, ກະຕຸກຊຸກຍູ້ການຈັດຕັ້ງປະຕິບັດມະຕິ ແລະ ແຜນການກອງປະຊຸມ ຄລຕ ທີ່ໄດ້ຖືກຮັບຮອງເອົາກ່ຽວກັບທຸກໆວຽກງານໃນການກະກຽມສ້າງຕັ້ງຕະຫຼາດຫຼັກຊັບ;
- ຮຽກປະຊຸມຄະນະປະສານງານ ເພື່ອກະກຽມກອງປະຊຸມ ຄລຕ ຫຼື ຮຽກປະຊຸມເພື່ອສຶກສາຄົ້ນຄວ້າ ເພື່ອສ້າງຄວາມເຂົ້າໃຈເປັນເອກະພາບໃນການຈັດຕັ້ງປະຕິບັດທາງດ້ານນະໂຍບາຍ, ລະບຽບກົດໝາຍ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບການກະກຽມສ້າງຕັ້ງຕະຫຼາດຫຼັກຊັບ ຫຼື ຮຽກປະຊຸມປຶກສາຫາລືວຽກງານຕ່າງໆ ທີ່ເຫັນວ່າຈຳເປັນ.

2) **ຄະນະປະສານງານຂອງຄະນະເລຂາທິການລັດຖະບານ**

- ຕິດຕາມ ແລະ ຊຸກຍູ້ ການໃຫ້ຄໍາເຫັນ ຫຼື ທິດຊີ້ນໍາ ຈາກລັດຖະບານຕໍ່ລະບຽບການຂອງບັນດາກະຊວງທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດລະບຽບນັ້ນໃຫ້ທັນກັບກໍານົດເວລາໃນການກະກຽມສ້າງຕັ້ງຕະຫຼາດຫຼັກຊັບ.

3) **ຄະນະປະສານງານຂອງຄະນະກໍາມະການປັບປຸງທຸລະກິດແຫ່ງຊາດ**

- ປະສານກັບສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອຜັນຂະຫຍາຍ ແຜນດໍາເນີນງານທີ່ຕິດພັນກັບໜ່ວຍງານຕົນ ໃຫ້ເປັນແຜນລະອຽດ ພ້ອມດຽວກັນນັ້ນກໍ່ຕ້ອງຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນງານດັ່ງກ່າວເປັນແຕ່ລະໄລຍະ ພ້ອມທັງລາຍງານຄວາມຄືບໜ້າໃຫ້ຄະນະກໍາມະການປັບປຸງທຸລະກິດແຫ່ງຊາດ, ແລະ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບຊາບເປັນແຕ່ລະໄລຍະ ເພື່ອສັງລວມເຂົ້າເປັນບົດລາຍງານໃຫ້ຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບຊາບ ແລະ ຂໍທິດຊີ້ນໍາໃນທາງປະຕິບັດ;
- ສະໜອງຂໍ້ມູນໃຫ້ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບບັນດາວິສາຫະກິດທີ່ນອນຢູ່ໃນເປົ້າໝາຍໃນການປັບປຸງ, ກະກຽມອອກຫຼັກຊັບ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ເຊິ່ງບັນດາກະຊວງທີ່ກ່ຽວຂ້ອງໄດ້ເຫັນດີ ແລະ ສະເໜີ ຫຼື ມີແຜນການປັບປຸງວິສາຫະກິດດັ່ງກ່າວ;
- ປະຕິບັດວຽກງານອື່ນໆ ຕາມທິດຊີ້ນໍາຂອງປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃນການສ້າງຕັ້ງຕະຫຼາດຫຼັກຊັບ ຫຼື ຕາມມະຕິກອງປະຊຸມຄະນະປະສານງານ.

4) **ຄະນະປະສານງານກະຊວງການເງິນ**

- ປະສານງານກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມການປັບປຸງນິຕິກໍາທີ່ບໍ່ສອດຄ່ອງ ຫຼື ສ້າງນິຕິກໍາໃໝ່ ເພື່ອເອື້ອອໍານວຍໃຫ້ແກ່ການຈັດຕັ້ງປະຕິບັດແຜນການປັບປຸງວິສາຫະກິດ ເພື່ອໃຫ້ໄດ້ເງື່ອນໄຂ ແລະ ຄວາມພ້ອມໃນການຫັນເປັນບໍລິສັດຫຸ້ນສ່ວນ, ບໍລິສັດມະຫາຊົນ ແລະ ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບໃຫ້ທັນເວລາ ຕາມການຕົກລົງຂອງລັດຖະບານ;
- ປະສານງານກັບສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອຜັນຂະຫຍາຍແຜນດໍາເນີນງານກ່ຽວກັບການສ້າງຕັ້ງຕະຫຼາດຫຼັກຊັບຂອງ

ຕົນໃຫ້ເປັນແຜນວຽກລະອຽດ ພ້ອມທັງຕິດຕາມຊຸກຍູ້ການຈັດຕັ້ງແຜນດຳເນີນງານດັ່ງກ່າວເປັນແຕ່ລະໄລຍະ ແລະ ລາຍງານຄວາມຄືບໜ້າໃຫ້ແກ່ຄະນະນຳກະຊວງ, ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບຊາບເປັນແຕ່ລະໄລຍະ ເພື່ອສັງລວມເຂົ້າໃນບົດລາຍງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ;

- ສະໜອງຂໍ້ມູນທາງດ້ານຖານະການເງິນຂອງບັນດາວິສາຫະກິດທີ່ຢູ່ໃນເປົ້າໝາຍໃຫ້ແກ່ບັນດາຄະນະປະສານງານ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
- ເປັນເຈົ້າການຄົ້ນຄວ້າ ແລະ ສະເໜີນະໂຍບາຍຕ່າງໆ ທີ່ຕິດພັນກັບການສ້າງຕັ້ງ, ການເຄື່ອນໄຫວ ແລະ ການພັດທະນາຕະຫຼາດຫຼັກຊັບຕໍ່ການນຳຂອງກະຊວງ ເຊັ່ນ: ນະໂຍບາຍອາກອນຕໍ່ນັກລົງທຶນ ແລະ ບໍລິສັດຈົດທະບຽນ, ແລະ ນະໂຍບາຍດ້ານການບັນຊີ ແລະ ການກວດສອບ;
- ປະຕິບັດວຽກງານອື່ນໆ ຕາມທິດຊີ້ນຳຂອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃນການສ້າງຕັ້ງຕະຫຼາດຫຼັກຊັບ ຫຼື ຕາມມະຕິກອງປະຊຸມຄະນະປະສານງານ.

5) **<u>ຄະນະປະສານງານກະຊວງອຸດສາຫະກຳ ແລະ ການຄ້າ</u>**

- ປະສານງານກັບສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອຊ່ວຍສະໜັບສະໜູນ ແລະ ຜັນຂະຫຍາຍແຜນດຳເນີນງານກ່ຽວກັບການສ້າງຕັ້ງຕະຫຼາດຫຼັກຊັບໃນຂົງເຂດວຽກງານຂອງຕົນໃຫ້ເປັນແຜນວຽກລະອຽດ ນຳສະເໜີແຜນວຽກດັ່ງກ່າວໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ການນຳຂອງກະຊວງໄດ້ຮັບຊາບ ພ້ອມທັງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດແຜນດຳເນີນງານດັ່ງກ່າວເປັນແຕ່ລະໄລຍະ ແລະ ລາຍງານຄວາມຄືບໜ້າໃຫ້ແກ່ຄະນະນຳກະຊວງ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບຊາບເປັນແຕ່ລະໄລຍະ ເພື່ອສັງລວມເຂົ້າໃນບົດລາຍງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
- ລົງເລິກຄົ້ນຄວ້ານະໂຍບາຍ ແລະ ລະບຽບການກ່ຽວກັບການຊຸກຍູ້ສົ່ງເສີມວິສາຫະກິດເອກະຊົນ ເພື່ອເປັນບ່ອນອີງໃນການກະກຽມອອກຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບຂອງບັນດາວິສາຫະກິດດັ່ງກ່າວ;

- ກະກຽມລະບຽບ ແລະ ຂັ້ນຕອນການຂຶ້ນທະບຽນວິສາຫະກິດໃນຮູບແບບບໍລິສັດມະຫາຊົນ;
- ປະຕິບັດວຽກງານອື່ນໆ ຕາມທິດຊີ້ນໍາຂອງປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃນການສ້າງຕັ້ງຕະຫຼາດຫຼັກຊັບ ຫຼື ຕາມມະຕິກອງປະຊຸມຄະນະປະສານງານ.

6) **<u>ຄະນະປະສານງານກະຊວງຍຸຕິທໍາ</u>**

- ປະສານງານກັບສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອຜັນຂະຫຍາຍແຜນດໍາເນີນງານທີ່ເປັນວຽກຕິດພັນກັບກະຊວງຂອງຕົນໃຫ້ເປັນແຜນວຽກລະອຽດ;
- ປະສານງານກັບພາກສ່ວນທີ່ກ່ຽວຂ້ອງພາຍໃນ ແລະ ພາຍນອກກະຊວງ ເພື່ອຕິດຕາມຊຸກຍູ້ຂະບວນການປັບປຸງນິຕິກໍາທີ່ບໍ່ສອດຄ່ອງ ຫຼື ສ້າງນິຕິກໍາໃໝ່ ທີ່ຈໍາເປັນເພື່ອເອື້ອອໍານວຍໃຫ້ແກ່ການຈັດຕັ້ງປະຕິບັດແຜນການປັບປຸງວິສາຫະກິດ ໃຫ້ໄດ້ເງື່ອນໄຂຄົບຖ້ວນ ເພື່ອຈົດທະບຽນໃນຕະຫຼາດຫຼັກຊັບໃຫ້ທັນເວລາ ຕາມການຕົກລົງຂອງລັດຖະບານ;
- ເປັນເສນາທິການໃຫ້ຄໍາປຶກສາກ່ຽວກັບການສ້າງນິຕິກໍາຕ່າງໆ ແກ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ໜ່ວຍປະສານງານອື່ນໆ ໃນການປັບປຸງ ແລະ ສ້າງນິຕິກໍາ ແລະ ໃນການຈັດຕັ້ງປະຕິບັດນິຕິກໍາ.

7) **<u>ຄະນະປະສານງານກະຊວງແຜນການ ແລະ ການລົງທຶນ</u>**

- ຄົ້ນຄວ້ານະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບທຸລະກິດຫຼັກຊັບ;
- ຊ່ວຍໂຄສະນາ ແລະ ເຜີຍແຜ່ນະໂຍບາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການສ້າງຕັ້ງ ແລະ ການເຄື່ອນໄຫວໂດຍສະເພາະແມ່ນການລົງທຶນທີ່ຕິດພັນກັບຕະຫຼາດຫຼັກຊັບ.

8) **<u>ຄະນະປະສານງານທະນາຄານແຫ່ງ ສປປ ລາວ</u>**

- ເປັນເສນາທິການໃຫ້ຄໍາປຶກສາ ແລະ ປະກອບຄໍາເຫັນດ້ານໂຄງປະກອບການຈັດຕັ້ງ, ການກໍານົດພາລະບົດບາດໜ້າທີ່ ແລະ ຂອບເຂດສິດຕ່າງໆ, ແລະ ການ

ບັນຈຸສັບຊ້ອນພະນັກງານຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ;

- ຄົ້ນຄ້ວາບຸກຄະລາກອນ ທີ່ຈະປະກອບເຂົ້າເປັນພະນັກງານລະດັບບໍລິຫານ ແລະ ວິຊາການຂອງຕະຫຼາດຫຼັກຊັບ ໂດຍສົມທົບກັບທະນາຄານແຫ່ງ ສປປ ລາວ;
- ກວດກາຊີວະປະຫວັດ ແລະ ປະກອບຄຳເຫັນຕໍ່ບຸກຄະລາກອນທີ່ຈະຖືກແຕ່ງຕັ້ງເປັນຜູ້ບໍລິຫານຂອງເປົ້າໝາຍບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

## ມາດຕາ 3. ເງື່ອນໄຂຂອງຜູ້ທີ່ຈະປະກອບເປັນຄະນະປະສານງານ

ຄະນະປະສານງານແຕ່ລະພາກສ່ວນປະກອບມີຫົວໜ້າ 01 ທ່ານ ໃນລະດັບຄະນະກົມ ຫຼື ຄະນະສະຖາບັນ, ຮອງຫົວໜ້າ 01 ທ່ານ ໃນລະດັບຄະນະກົມ, ຄະນະພະແນກ ຫຼື ຄະນະພະແນກສະຖາບັນ, ແລະ ພະນັກງານວິຊາການ. ຄະນະປະສານງານຈາກແຕ່ລະພາກສ່ວນ ຄວນມີຈຳນວນ 3-5 ຄົນ. ຄະນະດັ່ງກ່າວ ຖືກແຕ່ງຕັ້ງໂດຍລັດຖະມົນຕີວ່າການຂອງກະຊວງ ແລະ ຫົວໜ້າທະບວງທີ່ກ່ຽວຂ້ອງ.

## ມາດຕາ 4. ລະບອບການປະຊຸມຂອງຄະນະປະສານງານ

ແຕ່ລະຄະນະປະສານງານຕ້ອງຈັດກອງປະຊຸມຢ່າງໜ້ອຍເດືອນລະຄັ້ງ ພາຍໃນຄະນະປະສານງານຂອງຕົນ ເພື່ອກະກຽມລາຍງານໃຫ້ແກ່ກອງປະຊຸມລວມຂອງຄະນະປະສານງານ.

ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຮຽກປະຊຸມສາມັນເດືອນລະຄັ້ງ ເພື່ອສະຫຼຸບສັງລວມການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ແລະ ຕົກລົງບັນຫາທີ່ຕ້ອງການຄວາມເປັນເອກະພາບ.

ກໍລະນີຈຳເປັນ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສາມາດຮຽກປະຊຸມວິສາມັນຄົບຄະນະປະສານງານ ຫຼື ຄະນະປະສານງານທີ່ກ່ຽວຂ້ອງສະເພາະ ເພື່ອຕົກລົງບັນຫາທີ່ຮີບດ່ວນ.

## ມາດຕາ 5. ງົບປະມານ

ທະນາຄານແຫ່ງ ສປປ ລາວ ເປັນຜູ້ສະໜອງງົບປະມານສຳລັບເບ້ຍປະຊຸມໃຫ້ຄະນະປະສານງານທີ່ເຂົ້າຮ່ວມກອງປະຊຸມກັບສຳນັກງານ ຄລຕ ແລະ ເງິນແຮເດີນທາງໄປຕ່າງປະເທດ ເພື່ອເຂົ້າຮ່ວມການຝຶກອົບຮົມ ແລະ ເຄື່ອນໄຫວວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

**ມາດຕາ 6. ການຈັດຕັ້ງປະຕິບັດ**

ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ແລະ ຄະນະປະສານງານຂອງແຕ່ລະພາກສ່ວນທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຮີບຮ້ອນຈັດຕັ້ງປະຕິບັດໜ້າທີ່ຂອງຕົນຕາມຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 7. ຜົນສັກສິດ**

ຂໍ້ກຳນົດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການ**
**ຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**

**ເຊັນຮັບຮອງແລ້ວ**

ສົມສະຫວາດ ເລັ່ງສະຫັວດ